**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາບໍລິຫານ ສຳນັກງານປົກປ້ອງເງິນຝາກ ເລກທີ 07/ສພບ.ສປງ

ນະຄອນຫຼວງວຽງຈັນ, ວັນທີ 20 ມິຖຸນາ 2025

# ຄຳແນະນຳ
# ກ່ຽວກັບການຈ່າຍເງິນປົກປ້ອງ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານປົກປ້ອງເງິນຝາກ ສະບັບເລກທີ 68/ທຫລ, ລົງວັນທີ 22 ມັງກອນ 2019.

**ປະທານສະພາບໍລິຫານສຳນັກງານປົກປ້ອງເງິນຝາກ ອອກຄຳແນະນຳ:**

## I. ຈຸດປະສົງ

ຄຳແນະນຳສະບັບນີ້ສ້າງຂຶ້ນ ເພື່ອເປັນບ່ອນອີງໃນການຈ່າຍເງິນປົກປ້ອງ ໃຫ້ຜູ້ຝາກເງິນໃນເວລາສະມາຊິກໃດໜຶ່ງຕົກຢູ່ໃນສະພາວະລົ້ມລະລາຍ ແນໃສ່ຮັບປະກັນການດຳເນີນຂັ້ນຕອນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນມີຄວາມເປັນເອກະພາບ, ຖືກຕ້ອງ ແລະ ວ່ອງໄວ ສາມາດປະກອບສ່ວນສ້າງຄວາມເຊື່ອໝັ້ນໃຫ້ກັບສັງຄົມ ກໍຄືຜູ້ຝາກເງິນຕໍ່ລະບົບສະຖາບັນການເງິນ ຢູ່ ສປປ ລາວ.

## II. ການອະທິບາຍຄຳສັບ

1. **ເງິນຝາກຂອງຜູ້ບໍລິຫານ** ໝາຍເຖິງ ເງິນຝາກຂອງ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າພະແນກ ແລະ ຫົວໜ້າສາຂາຂອງ ສະຖາບັນການເງິນເອງ ຫຼື ຜູ້ມີຕຳແໜ່ງທຽບເທົ່າ ທີ່ໄດ້ຮັບນະໂຍບາຍເທົ່າກັບຕຳແໜ່ງຜູ້ບໍລິຫານທີ່ກ່າວມານັ້ນ;

2. **ເງິນຝາກຂອງຜູ້ຖືຮຸ້ນລາຍໃຫຍ່** ໝາຍເຖິງ ເງິນຝາກຂອງ ຜູ້ຖືຮຸ້ນ ແຕ່ສິບສ່ວນຮ້ອຍ (10%) ຂຶ້ນໄປຂອງຈຳນວນຮຸ້ນທັງໝົດ ທີ່ສາມາດລົງຄະແນນສຽງໄດ້;

3. **ເງິນຝາກຂອງສະຖາບັນການເງິນອື່ນ** ໝາຍເຖິງ ເງິນຝາກຂອງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ໂຮງຊວດຈຳ, ບໍລິສັດເຊົ່າ ສິນເຊື່ອ ແລະ ສະຖາບັນການເງິນອື່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

**4. ເງິນຝາກຄັງເງິນແຫ່ງຊາດ** ໝາຍເຖິງ ເງິນຝາກຂອງການຈັດຕັ້ງບໍລິຫານວິຊາການ ທີ່ຄຸ້ມຄອງບໍລິຫານເງິນຂອງລັດໃຫ້ລວມສູນເຂົ້າບັນຊີຄັງເງິນແຫ່ງຊາດ ຕາມລະບົບສາຍຕັ້ງໃນຂອບເຂດທົ່ວປະເທດ;

**5. ເງິນຝາກຂອງອົງການຈັດຕັ້ງລັດ** ໝາຍເຖິງ ເງິນຝາກຂອງ ອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເຊັ່ນ: ສະພາແຫ່ງຊາດ, ລັດຖະບານ, ສະພາປະຊາຊົນ ແລະ ອໍານາດການປົກຄອງທ້ອງຖິ່ນ (ຂັ້ນແຂວງ, ເມືອງ ແລະ ບ້ານ), ສານປະຊາຊົນຂັ້ນຕ່າງໆ, ອົງການໄອຍະການປະຊາຊົນຂັ້ນຕ່າງໆ, ສະຖານທູດ ຫຼື ສະຖານກົງສູນຂອງ ສປປ ລາວ ທີ່ປະຈໍາຢູ່ຕ່າງປະເທດ;

**6. ເງິນຝາກຂອງອົງການຈັດຕັ້ງສາກົນ** ໝາຍເຖິງ ເງິນຝາກຂອງ ອົງການຈັດຕັ້ງ ຫຼື ພາກສ່ວນ ທີ່ຂຶ້ນກັບຕ່າງປະເທດ ແຕ່ມີທີ່ຕັ້ງສໍານັກງານ ຢູ່ ສປປ ລາວ ເຊັ່ນ: ສະຖານທູດຂອງຕ່າງປະເທດທີ່ປະຈໍາຢູ່ ສປປ ລາວ, ສະຫະປະຊາຊາດ (UN), ກຸ່ມທະນາຄານໂລກ (WBG), ທະນາຄານພັດທະນາອາຊີ (ADB), ກອງທຶນການເງິນສາກົນ (IMF), ອົງການທີ່ບໍ່ຂຶ້ນກັບລັດຖະບານ (NGO), ອົງການເພື່ອພັດທະນາແມ່ຍິງ ແລະ ເດັກນ້ອຍ (UNICEF), ອົງການຊ່ວຍເຫຼືອລ້າ (JICA ແລະ KOICA), ອົງການເກັບກູ້ລະເບີດ (UXO) ແລະ ອົງການຈັດຕັ້ງສາກົນອື່ນ;”

**7. ໜີ້ສິນ** ໝາຍເຖິງ ໜີ້ສິນທີ່ເກີນກໍານົດເວລາຊໍາລະ;

**8. ຄະນະຮັບຜິດຊອບຈ່າຍເງິນປົກປ້ອງ** ໝາຍເຖິງ ຄະນະກໍາມະການທີ່ໄດ້ຮັບການແຕ່ງຕັ້ງ ໂດຍຫົວໜ້າສໍານັກງານປົກປ້ອງເງິນຝາກ ເພື່ອດໍາເນີນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ທີ່ຝາກໄວ້ນໍາສະມາຊິກ ທີ່ຢູ່ໃນສະພາວະລົ້ມລະລາຍ;

**9. ວັນສຸດທ້າຍຂອງການດໍາເນີນທະລະກິດ** ໝາຍເຖິງ ວັນທີ່ທະນາຄານແຫ່ງ ສປປ ລາວ ມີຄໍາສັ່ງໃຫ້ສະຖາບັນການເງິນປິດກິດຈະການ.

## III. ການກະກຽມຄວາມພ້ອມໃນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ

❖ **ໄລຍະທີໜຶ່ງ:**

ກໍລະນີທະນາຄານແຫ່ງ ສປປ ລາວ ນໍາໃຊ້ມາດຕະການແກ້ໄຂບັນຫາສະຖາບັນການເງິນ ໂດຍມີການແຕ່ງຕັ້ງຄະນະຄວບຄຸມ ເພື່ອແກ້ໄຂບັນຫາສະຖາບັນການເງິນ ສໍານັກງານປົກປ້ອງເງິນຝາກ ຕ້ອງປະຕິບັດດັ່ງນີ້:

1. ຄົ້ນຄວ້າ ແລະ ນໍາສົ່ງຜູ້ຕາງໜ້າ ຂອງສໍານັກງານປົກປ້ອງເງິນຝາກ ເພື່ອເຂົ້າຮ່ວມຄະນະຄວບຄຸມສະຖາບັນການເງິນທີ່ຢູ່ໃນພາວະວິກິດ;

2. ເກັບກໍາ, ສັງລວມ ແລະ ຕິດຕາມ ຂໍ້ມູນເງິນຝາກ ແລະ ເງິນກູ້ຂອງຜູ້ຝາກເງິນ ຢ່າງໃກ້ຊິດ ເພື່ອນໍາມາຄິດໄລ່ເງິນປົກປ້ອງທີ່ຕ້ອງຈ່າຍຕົວຈິງ ແລະ ປະເມີນຄວາມອາດສາມາດໃນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ;

3. ກະກຽມແຫຼ່ງທຶນທີ່ຈະນໍາໃຊ້ເຂົ້າໃນການຈ່າຍເງິນປົກປ້ອງ ກໍລະນີຄັງປົກປ້ອງເງິນຝາກບໍ່ພຽງພໍໃນການຈ່າຍເງິນປົກປ້ອງ ຕ້ອງໄດ້ຊອກຫາແຫຼ່ງທຶນເພີ່ມ ເພື່ອກຽມພ້ອມໃນການຈ່າຍເງິນປົກປ້ອງ;

4. ກະກຽມຮ່າງແຜນການຮອບດ້ານໃນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ;

5. ກະກຽມບັນດາແບບຟອມ ແລະ ຮ່າງເອກະສານຕ່າງໆ ທີ່ຈະນໍາໃຊ້ເຂົ້າໃນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ;

6. ລາຍງານການກະກຽມຄວາມພ້ອມໃນການຈ່າຍເງິນປົກປ້ອງ ໃຫ້ປະທານສະພາບໍລິຫານ ເພື່ອຂໍທິດຊີ້ນໍາໃນການຈັດຕັ້ງປະຕິບັດ.

❖ **ໄລຍະທີສອງ:**

ພາຍຫຼັງໄດ້ຮັບແຈ້ງການຈາກທະນາຄານແຫ່ງ ສປປ ລາວ ໃຫ້ສໍານັກງານປົກປ້ອງເງິນຝາກ ດໍາເນີນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ, ສໍານັກງານປົກປ້ອງເງິນຝາກ ຕ້ອງປະຕິບັດດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບຈ່າຍເງິນປົກປ້ອງ ເພື່ອດຳເນີນການ ກະກຽມຄວາມພ້ອມ ແລະ ຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ;

2. ສະເໜີເຖິງຄະນະຄວບຄຸມ ເພື່ອຂໍຂໍ້ມູນເງິນຝາກ ແລະ ເງິນກູ້ຕາມແບບພິມລາຍງານທີ່ສຳນັກງານປົກປ້ອງເງິນຝາກ ກຳນົດໃຫ້ສະມາຊິກ ໃນວັນສຸດທ້າຍຂອງການດຳເນີນທຸລະກິດຂອງສະມາຊິກທີ່ຢູ່ໃນສະພາວະລົ້ມລະລາຍ;

3. ທົບທວນ, ກວດກາຄວາມຖືກຕ້ອງຂອງຂໍ້ມູນເງິນຝາກ ແລະ ເງິນກູ້ ພ້ອມທັງປະເມີນຄວາມອາດສາມາດໃນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ;

4. ໄຈ້ແຍກຂໍ້ມູນໃຫ້ລະອຽດເປັນຕົ້ນ: ຈຳນວນບັນຊີເງິນຝາກ, ຈຳນວນຜູ້ຝາກເງິນ ແລະ ຍອດເຫຼືອເງິນຝາກທີ່ໄດ້ຮັບການປົກປ້ອງ;

5. ປະເມີນຄວາມອາດສາມາດໃນການຮຽກເກັບຄືນເງິນປົກປ້ອງທີ່ໄດ້ຈ່າຍໃຫ້ຜູ້ຝາກເງິນ ໃນຂະບວນການຊຳລະສະສາງຊັບສິນ;

6. ຮັບຮອງແຜນການຮອບດ້ານໃນການຈ່າຍເງິນປົກປ້ອງ;

7. ກະກຽມຄວາມພ້ອມດ້ານບໍລິຫານຈັດການ ເຊັ່ນ: ງົບປະມານທີ່ຈະນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຈ່າຍເງິນປົກປ້ອງ; ສະຖານທີ່ຮັບຄຳຮ້ອງຂໍຮັບເງິນປົກປ້ອງ; ພາຫະນະຮັບໃຊ້ໃນການເດີນທາງ; ອຸປະກອນຕ່າງໆ ທີ່ຈະນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຈ່າຍເງິນປົກປ້ອງ ແລະ ອື່ນໆ ທີ່ເຫັນວ່າມີຄວາມຈຳເປັນ;

8. ທົບທວນຮ່າງແຈ້ງການຕ່າງໆ ເພື່ອປະກາດຜ່ານຫຼາຍຊ່ອງທາງ ເຖິງສັງຄົມ ກໍຄືຜູ້ຝາກເງິນ ເພື່ອມາຍື່ນຄຳຮ້ອງຂໍຮັບເງິນປົກປ້ອງ ຈາກສຳນັກງານປົກປ້ອງເງິນຝາກ;

9. ປະສານງານກັບສຳນັກຂ່າວຕ່າງໆ ເພື່ອເຜີຍແຜ່ແຈ້ງການຕ່າງໆ ແລະ ຈັດຕັ້ງການຖະແຫຼງຂ່າວ ກ່ຽວກັບການກະກຽມຄວາມພ້ອມໃນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ;

10. ປະສານຂໍຄວາມຮ່ວມມືກັບບັນດາການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ຂັ້ນຕອນການຈ່າຍເງິນປົກປ້ອງ ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງຕາມລະບຽບການ.

## IV. ການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ

ພາຍຫຼັງສຳເລັດການກະກຽມຄວາມພ້ອມດ້ານຕ່າງໆ ໃນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ສຳນັກງານປົກປ້ອງເງິນຝາກຕ້ອງປະຕິບັດດັ່ງນີ້:

1. ອອກແຈ້ງການ ແລະ ຈັດຕັ້ງການຖະແຫຼງຂ່າວ ເພື່ອໃຫ້ຜູ້ຝາກເງິນມາຍື່ນຄຳຮ້ອງຂໍຮັບເງິນປົກປ້ອງຈາກສຳນັກງານປົກປ້ອງເງິນຝາກ;

2. ດຳເນີນການຮັບສຳນວນຄຳຮ້ອງຂໍຮັບເງິນປົກປ້ອງຈາກຜູ້ຝາກເງິນ;

3. ກວດກາຄວາມຖືກຕ້ອງຂອງຂໍ້ມູນເງິນຝາກ ແລະ ເງິນກູ້ ຂອງຜູ້ຝາກເງິນ;

4. ສ້າງຕາຕະລາງສັງລວມ, ໄຈ້ແຍກຂໍ້ມູນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ;

5. ຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນດ້ວຍການໂອນໄປຍັງບັນຊີເງິນຝາກປາຍທາງ ຫຼື ຈ່າຍເປັນເງິນສົດຕາມການຕົກລົງເຫັນດີຂອງຄະນະສຳນັກງານປົກປ້ອງເງິນຝາກ;

6. ປະກາດໃຫ້ຜູ້ຝາກເງິນຊາບ ກ່ຽວກັບຄວາມຄືບໜ້າໃນການຈ່າຍເງິນປົກປ້ອງ ແລະ ການສິ້ນສຸດການຈັດຕັ້ງປະຕິບັດການຈ່າຍເງິນປົກປ້ອງ;

7. ສ້າງຕາຕະລາງສັງລວມຈຳນວນບັນຊີ, ຈຳນວນຜູ້ຝາກເງິນ ແລະ ຍອດເຫຼືອເງິນຝາກ ທີ່ເກີນວົງເງິນປົກປ້ອງ ທີ່ຍັງບໍ່ທັນໄດ້ມາຍື່ນຮັບເງິນປົກປ້ອງ ແລະ ທີ່ບໍ່ໄດ້ຮັບການປົກປ້ອງ ເພື່ອສະໜອງໃຫ້ຄະນະຊຳລະສະສາງຊັບສິນ;

8. ສະຫຼຸບ-ລາຍງານຜົນການຈ່າຍເງິນປົກປ້ອງ ໃຫ້ຂັ້ນເທິງຮັບຊາບ ແລະ ມີທິດຊີ້ນຳ.

## V. ການສະເໜີຂໍຮັບເງິນປົກປ້ອງ

ພາຍຫຼັງສຳນັກງານປົກປ້ອງເງິນຝາກ ແຈ້ງໃຫ້ຜູ້ຝາກເງິນມາຍື່ນຄຳຮ້ອງຂໍຮັບເງິນປົກປ້ອງ, ຜູ້ຝາກເງິນຕ້ອງຍື່ນເອກະສານຂໍຮັບເງິນປົກປ້ອງນຳສຳນັກງານປົກປ້ອງເງິນຝາກ ພາຍໃນກຳນົດເວລາ 90 ວັນ ນັບແຕ່ວັນທີ່ເລີ່ມປະກາດໃຫ້ມາຍື່ນຄຳຮ້ອງຂໍຮັບເງິນປົກປ້ອງ ແລະ ສາມາດຂະຫຍາຍເວລາອອກໄປໄດ້ສອງຄັ້ງ, ຄັ້ງລະບໍ່ເກີນ 90 ວັນ ຊຶ່ງລາຍການເອກະສານທີ່ຕ້ອງປະກອບມີດັ່ງນີ້:

1. ໃບຄຳຮ້ອງຂໍຮັບເງິນປົກປ້ອງ 01 ສະບັບ ຊຶ່ງສາມາດດາວໂຫຼດແບບພິມໄດ້ຈາກເວັບໄຊທ໌ ຂອງສຳນັກງານປົກປ້ອງເງິນຝາກ ຫຼື ຊ່ອງທາງອື່ນ ຕາມທີ່ສຳນັກງານປົກປ້ອງເງິນຝາກໄດ້ກຳນົດໄວ້;
2. ສຳເນົາປື້ມສຳມະໂນຄົວ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນ ຂອງຜູ້ຝາກເງິນ ແລະ ຜູ້ທີ່ໄດ້ຮັບມອບສິດທີ່ຍັງມີອາຍຸການນຳໃຊ້ 01 ສະບັບ ພ້ອມດ້ວຍຕົ້ນສະບັບ;
3. ສຳເນົາປື້ມບັນຊີເງິນຝາກ ແລະ ເອກະສານຢັ້ງຢືນເງິນຝາກ ຫຼື ຂໍ້ມູນຢັ້ງຢືນເງິນຝາກທາງເອເລັກໂຕຣນິກທຸກປະເພດ ແລະ ທຸກສະກຸນເງິນ ທີ່ຝາກໄວ້ນຳສະຖາບັນການເງິນທີ່ຢູ່ໃນສະພາວະລົ້ມລະລາຍ. ກໍລະນີປື້ມບັນຊີເສຍຫາຍຜູ້ຝາກເງິນສາມາດສຳເນົາຈາກ Application Mobile Banking;
4. ສຳເນົາປື້ມບັນຊີເງິນຝາກ ຫຼື ຂໍ້ມູນຢັ້ງຢືນເງິນຝາກທາງເອເລັກໂຕຣນິກ ທີ່ເປີດໄວ້ນຳທະນາຄານທຸລະກິດອື່ນ, ກໍລະນີທີ່ບໍ່ມີບັນຊີເງິນຝາກຢູ່ທະນາຄານທຸລະກິດອື່ນ ຜູ້ຝາກເງິນຕ້ອງໄດ້ເປີດບັນຊີເງິນຝາກໃໝ່ກັບທະນາຄານທຸລະກິດໃດໜຶ່ງ ເພື່ອຮັບເງິນປົກປ້ອງຈາກສຳນັກງານປົກປ້ອງເງິນຝາກ;
5. ສຳເນົາເອກະສານຢັ້ງຢືນຂໍ້ມູນໜີ້ ກັບສະມາຊິກ (ຖ້າມີ);
6. ໃບມອບສິດ ຕາມແບບພິມທີ່ ສຳນັກງານປົກປ້ອງເງິນຝາກ ກຳນົດ ຕົ້ນສະບັບ 01 ສະບັບ ໃນກໍລະນີທີ່ຜູ້ຝາກເງິນບໍ່ສາມາດມາຍື່ນດ້ວຍຕົນເອງໄດ້;
7. ໜັງສືຢັ້ງຢືນການເສຍຊີວິດ ແລະ ໃບຢັ້ງຢືນການສືບທອດມູນມໍລະດົກ ຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ກໍລະນີເຈົ້າຂອງບັນຊີເງິນຝາກເສຍຊີວິດ;
8. ເອກະສານອື່ນທີ່ເຫັນວ່າມີຄວາມຈຳເປັນຕາມການຮຽກຮ້ອງ ຂອງສຳນັກງານປົກປ້ອງເງິນຝາກ.

## VI. ເງື່ອນໄຂ ແລະ ບູລິມະສິດ ໃນການຈ່າຍເງິນປົກປ້ອງ

### ກ. ເງື່ອນໄຂໃນການຈ່າຍເງິນປົກປ້ອງ:

ສຳນັກງານປົກປ້ອງເງິນຝາກ ຕ້ອງຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງຕາມທີ່ກຳນົດໄວ້ໃນ ຂໍ້ທີ 5, ໂລແມັງ II ຂອງຄຳແນະນຳສະບັບນີ້ ຕາມແຕ່ລະກໍລະນີດັ່ງນີ້:

1. ກໍລະນີເງິນຝາກບໍ່ເກີນວົງເງິນປົກປ້ອງສູງສຸດ, ຜູ້ຝາກເງິນຈະໄດ້ຮັບເງິນຝາກຂອງຕົນຄືນທັງໝົດ

**ຕົວຢ່າງ:** ທ່ານ ກ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງ ຢູ່ທະນາຄານ A ຈຳນວນ 03 ບັນຊີ ລວມເປັນເງິນທັງໝົດ ຈຳນວນ 95,000,000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ). ກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ທ່ານ ກ ຈະໄດ້ຮັບເງິນປົກປ້ອງ ຈຳນວນ 95,000,000 ກີບ ຈາກ ສປງ.

2. ກໍລະນີເງິນຝາກເກີນວົງເງິນປົກປ້ອງສູງສຸດ, ຜູ້ຝາກເງິນຈະໄດ້ຮັບເງິນປົກປ້ອງຈາກ ສປງ ຕາມວົງເງິນປົກປ້ອງສູງສຸດ

**ຕົວຢ່າງ:** ທ່ານ ກ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງ ຢູ່ທະນາຄານ A ຈຳນວນ 03 ບັນຊີ ລວມເປັນເງິນ ທັງໝົດ ຈຳນວນ 150,500,000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ). ກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ທ່ານ ກ ຈະໄດ້ຮັບເງິນປົກປ້ອງ ຈຳນວນ 100,000,000 ກີບ ຈາກ ສປງ. ສຳລັບຈຳນວນເງິນທີ່ຍັງເຫຼືອ 50,500,000 ກີບ ທ່ານ ກ ຈະໄດ້ຮັບຄືນຈາກຂະບວນການຊຳລະສະສາງຊັບສິນຂອງສະມາຊິກທີ່ຢູ່ໃນສະພາວະລົ້ມລະລາຍ ຕາມບູລິມະສິດທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**3.** ກໍລະນີເງິນຝາກທີ່ເປັນສະກຸນເງິນຕາຕ່າງປະເທດຕ້ອງຄິດໄລ່ທຽບເທົ່າສະກຸນເງິນກີບ ໂດຍນໍາໃຊ້ອັດຕາແລກປ່ຽນ (ອັດຕາຊື້) ທີ່ທະນາຄານແຫ່ງ ສປປ ລາວ ກໍານົດໃນວັນສຸດທ້າຍຂອງການດໍາເນີນທຸລະກິດຂອງສະມາຊິກທີ່ຢູ່ໃນສະພາວະລົ້ມລະລາຍ

**ຕົວຢ່າງ:** ທ່ານ ກ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງ ຢູ່ທະນາຄານ A ຈໍານວນ 03 ບັນຊີ ໃນນີ້ເປັນສະກຸນເງິນກີບ ມີຍອດເຫຼືອເງິນຝາກ ຈໍານວນ 40,000,000 ກີບ, ສະກຸນເງິນໂດລາສະຫະລັດ ມີຍອດເຫຼືອເງິນຝາກ ຈໍານວນ 1,000 ໂດລາ ແລະ ສະກຸນເງິນບາດ ມີຍອດເຫຼືອເງິນຝາກ ຈໍານວນ 20,000 ບາດ. ກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ຊຶ່ງອັດຕາແລກປ່ຽນ (ອັດຕາຊື້) ທີ່ທະນາຄານແຫ່ງ ສປປ ລາວ ກໍານົດອອກໃນວັນສຸດທ້າຍຂອງການດໍາເນີນທຸລະກິດ ຄື: 1 ໂດລາ ເທົ່າກັບ 20,000 ກີບ ແລະ 1 ບາດ ເທົ່າກັບ 600 ກີບ ທ່ານ ກ ຈະໄດ້ຮັບເງິນປົກປ້ອງດັ່ງນີ້:

- ສະກຸນເງິນກີບ ຈໍານວນ 40,000,000 ກີບ;
- ສະກຸນເງິນໂດລາສະຫະລັດ ຈໍານວນ 1,000 ໂດລາ x 20,000 ກີບ = 20,000,000 ກີບ;
- ສະກຸນເງິນບາດ ຈໍານວນ 20,000 ບາດ x 600 ກີບ = 12,000,000 ກີບ;
    - ລວມທັງໝົດ ຈໍານວນ 72,000,000 ກີບ.
    - ຈໍານວນເງິນປົກປ້ອງທີ່ ທ່ານ ກ ຈະໄດ້ຮັບທັງໝົດທຽບເທົ່າກີບ ຈໍານວນ 72,000,000 ກີບ.

**4.** ການຈ່າຍເງິນປົກປ້ອງສໍາລັບບັນຊີເງິນຝາກຮ່ວມ ທີ່ມີເຈົ້າຂອງບັນຊີເງິນຝາກນັບແຕ່ 2 ຄົນຂຶ້ນໄປ ຕ້ອງອີງຕາມສັດສ່ວນທີ່ໄດ້ລະບຸໄວ້ໃນປຶ້ມບັນຊີເງິນຝາກ ຫຼື ເອກະສານອື່ນທີ່ກ່ຽວຂ້ອງທີ່ມີການສະແດງຫຼັກຖານການເປັນເຈົ້າຂອງບັນຊີເງິນຝາກ. ໃນກໍລະນີບໍ່ສາມາດກໍານົດສັດສ່ວນກໍາມະສິດ ຂອງບັນດາເຈົ້າຂອງບັນຊີຮ່ວມ, ສໍານັກງານປົກປ້ອງເງິນຝາກຕ້ອງແບ່ງປັນເງິນຝາກໃນສັດສ່ວນເທົ່າກັນໃຫ້ກັບຜູ້ຝາກເງິນແຕ່ລະລາຍ.

❖ ສັດສ່ວນການຖືບັນຊີຂອງຜູ້ຝາກເງິນ ແຕ່ລະລາຍ ທີ່ມີໃນບັນຊີຮ່ວມ ຕ້ອງລວມເຂົ້າກັນກັບບັນຊີເງິນຝາກອື່ນ ຂອງຜູ້ຝາກເງິນທີ່ກ່ຽວຂ້ອງ ເພື່ອເປັນການກໍານົດຈໍານວນເງິນປົກປ້ອງ ທີ່ຕ້ອງຈ່າຍຕາມວົງເງິນປົກປ້ອງສູງສຸດ ທີ່ກໍານົດໄວ້.

**ຕົວຢ່າງ 01:** ທ່ານ ກ ແລະ ທ່ານ ຂ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງຮ່ວມກັນ ຢູ່ທະນາຄານ A ລວມເປັນເງິນທັງໝົດ ຈໍານວນ 160,000,000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ). ກໍລະນີເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ທ່ານ ກ ແລະ ທ່ານ ຂ ຈະໄດ້ຮັບເງິນປົກປ້ອງຈໍານວນເທົ່າກັນ ຜູ້ລະ 80,000,000 ກີບ ຈາກ ສປງ. ກໍລະນີທ່ານ ກ ແລະ ທ່ານ ຂ ລ້ວນແຕ່ມີບັນຊີເງິນຝາກສະເພາະຂອງຕົນ ຢູ່ທະນາຄານ A ອີກຈໍານວນໜຶ່ງ, ສປງ ຕ້ອງນໍາເອົາຈໍານວນເງິນທີ່ໄດ້ຮັບການແບ່ງປັນຈາກບັນຊີເງິນຝາກຮ່ວມບວກໃສ່ກັບຈໍານວນເງິນໃນບັນຊີເງິນຝາກສະເພາະຂອງແຕ່ລະຄົນ ແລະ ຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນແຕ່ລະຄົນ ບໍ່ເກີນວົງເງິນປົກປ້ອງສູງສຸດຄື 100,000,000 ກີບ ຕໍ່ຄົນ.

❖ ໃນກໍລະນີບັນຊີເງິນຝາກຮ່ວມ ລະຫວ່າງ ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງ ແລະ ຜູ້ຝາກເງິນທີ່ບໍ່ໄດ້ຮັບການປົກປ້ອງ ສໍານັກງານປົກປ້ອງເງິນຝາກຈະຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນທີ່ໄດ້ຮັບການປົກປ້ອງເທົ່ານັ້ນ ໂດຍແບ່ງປັນຕາມສັດສ່ວນ ແລະ ຈ່າຍຕາມວົງເງິນປົກປ້ອງສູງສຸດ ທີ່ກໍານົດໄວ້;

**ຕົວຢ່າງ 02:** ທ່ານ ກ ເປັນຜູ້ອໍານວຍການຂອງ ທະນາຄານ A (ເປັນຜູ້ຝາກເງິນທີ່ບໍ່ໄດ້ຮັບການປົກປ້ອງ) ໄດ້ເປີດບັນຊີເງິນຝາກຮ່ວມກັບ ທ່ານ ຂ ຢູ່ທະນາຄານ A ລວມເປັນເງິນທັງໝົດ ຈໍານວນ 160,000,000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ). ກໍລະນີເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ທ່ານ ຂ ຈະໄດ້ຮັບເງິນປົກປ້ອງຈໍານວນ 80,000,000 ກີບ ຈາກ ສປງ. ສໍາລັບ ທ່ານ ກ ຈະບໍ່ໄດ້ຮັບເງິນປົກປ້ອງ ຈາກ ສປງ.

**5.** ເງິນຝາກຂອງຜູ້ຝາກເງິນທີ່ເສຍຊີວິດ ໄດ້ຮັບເງິນປົກປ້ອງຕາມວົງເງິນປົກປ້ອງສູງສຸດທີ່ກໍານົດໄວ້ ໂດຍຈ່າຍໃຫ້ຜູ້ສືບທອດມູນມໍລະດົກ ທີ່ມີສິດຄົບຖ້ວນຖືກຕ້ອງຕາມກົດໝາຍ ຊຶ່ງຈະໄດ້ຮັບເງິນປົກປ້ອງຕາມແຕ່ລະກໍລະນີດັ່ງນີ້:

❖ ຜູ້ຝາກເງິນທີ່ເສຍຊີວິດ ກ່ອນວັນສຸດທ້າຍຂອງການດໍາເນີນທຸລະກິດຂອງສະມາຊິກ, ຈໍານວນເງິນປົກປ້ອງຂອງຜູ້ຝາກເງິນທີ່ເສຍຊີວິດ ຕ້ອງບວກເຂົ້າກັບເງິນຝາກຂອງຜູ້ສືບທອດມູນມໍລະດົກຂອງຜູ້ກ່ຽວ (ຖ້າມີ). ກໍລະນີມີຜູ້ສືບທອດມູນມໍລະດົກຫຼາຍຄົນ ສໍານັກງານປົກປ້ອງເງິນຝາກຈະຈ່າຍເງິນປົກປ້ອງໃຫ້ຜູ້ສືບທອດມູນມໍລະດົກ ໂດຍແບ່ງປັນຈໍານວນເງິນຝາກຂອງຜູ້ເສຍຊີວິດໃຫ້ແຕ່ລະຄົນໃນສັດສ່ວນທີ່ເທົ່າກັນ ແລະ ຈ່າຍຕາມວົງເງິນປົກປ້ອງສູງສຸດທີ່ກໍານົດໄວ້ໃນລະບຽບການ

**ຕົວຢ່າງ 01:** ທ່ານ ກ ເປັນພໍ່ຂອງ ທ່ານ ຂ, ທັງສອງຄົນ ມີບັນຊີເງິນຝາກ ຢູ່ທະນາຄານ A ຜູ້ລະ 01 ບັນຊີ, ໃນແຕ່ລະບັນຊີມີຍອດເຫຼືອເງິນຝາກ ບັນຊີລະ 80,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ). ໃນກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ແລະ ທ່ານ ກ ຜູ້ເປັນພໍ່ ໄດ້ເສຍຊີວິດ ກ່ອນວັນສຸດທ້າຍຂອງການດໍາເນີນທຸລະກິດຂອງ ທະນາຄານ A ແລະ ພາກສ່ວນກ່ຽວຂ້ອງໄດ້ຢັ້ງຢືນໃຫ້ ທ່ານ ຂ ເປັນຜູ້ສືບທອດມູນມໍລະດົກພຽງຜູ້ດຽວ, ດັ່ງນັ້ນ ທ່ານ ຂ ຈະມີຍອດເງິນຝາກທັງໝົດ ຈໍານວນ 160,000,000 ກີບ ແລະ ຈະໄດ້ຮັບເງິນປົກປ້ອງ ຈໍານວນ 100,000,000 ກີບ.

**ຕົວຢ່າງ 02:** ທ່ານ ກ ເປັນພໍ່ຂອງ ທ່ານ ຂ ແລະ ທ່ານ ຄ, ທັງສາມຄົນ ມີບັນຊີເງິນຝາກ ຢູ່ທະນາຄານ A ຜູ້ລະ 01 ບັນຊີ, ບັນຊີເງິນຝາກຂອງພໍ່ມີຍອດເຫຼືອເງິນຝາກ ຈໍານວນ 120,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແລະ ບັນຊີເງິນຝາກຂອງລູກທັງສອງຄົນມີຍອດເຫຼືອເງິນຝາກ ບັນຊີລະ 30,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ). ໃນກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ແລະ ທ່ານ ກ ຜູ້ເປັນພໍ່ ໄດ້ເສຍຊີວິດ ກ່ອນວັນສຸດທ້າຍຂອງການດໍາເນີນທຸລະກິດຂອງ ທະນາຄານ A ແລະ ພາກສ່ວນກ່ຽວຂ້ອງໄດ້ຢັ້ງຢືນໃຫ້ ທ່ານ ຂ ແລະ ທ່ານ ຄ ເປັນຜູ້ສືບທອດມູນມໍລະດົກ. ທັງສອງຄົນ ຈະໄດ້ຮັບເງິນປົກປ້ອງຈາກ ສປງ ດັ່ງນີ້: ເງິນຝາກທີ່ເປັນສ່ວນຂອງຕົນເອງ ຜູ້ລະ 30,000,000 ກີບ ແລະ ຈາກບັນຊີເງິນຝາກຂອງພໍ່ ຈໍານວນ 120,000,000 ກີບ ແບ່ງປັນໃຫ້ລູກທັງສອງຄົນ ຜູ້ລະ 60,000,000 ກີບ, ແຕ່ລະຄົນມີຍອດເຫຼືອເງິນຝາກ ຜູ້ລະ 90,000,000 ກີບ. ສະນັ້ນ, ຈຶ່ງໄດ້ຮັບເງິນປົກປ້ອງຈາກ ສປງ ເຕັມຈໍານວນເງິນຝາກ ຄືຜູ້ລະ 90,000,000 ກີບ.

❖ ຜູ້ຝາກເງິນທີ່ເສຍຊີວິດ ຫຼັງວັນສຸດທ້າຍຂອງການດໍາເນີນທຸລະກິດຂອງສະມາຊິກ, ສິດຂອງຜູ້ຝາກເງິນທີ່ເສຍຊີວິດຕໍ່ກັບຈໍານວນເງິນປົກປ້ອງ ຈະຖືກໂອນໃຫ້ຜູ້ສືບທອດມູນມໍລະດົກຂອງຜູ້ກ່ຽວ ທີ່ຖືກຕ້ອງຕາມກົດໝາຍ. ກໍລະນີມີຜູ້ສືບທອດມູນມໍລະດົກຫຼາຍຄົນ ສປງ ຈະຈ່າຍເງິນປົກປ້ອງ ໃຫ້ຜູ້ສືບທອດມູນມໍລະດົກ ໂດຍແບ່ງປັນຈໍານວນເງິນປົກປ້ອງຂອງຜູ້ເສຍຊີວິດໃຫ້ແຕ່ລະຄົນໃນສັດສ່ວນທີ່ເທົ່າກັນ ແລະ ຈໍານວນເງິນປົກປ້ອງຈະຖືກຄິດໄລ່ຕ່າງຫາກຈາກເງິນປົກປ້ອງຂອງຜູ້ສືບທອດມູນມໍລະດົກ;

**ຕົວຢ່າງ 01:** ທ່ານ ກ ເປັນພໍ່ຂອງ ທ່ານ ຂ, ທັງສອງຄົນ ມີບັນຊີເງິນຝາກ ຢູ່ທະນາຄານ A ຜູ້ລະ 01 ບັນຊີ, ໃນແຕ່ລະບັນຊີມີຍອດເຫຼືອເງິນຝາກ ບັນຊີລະ 100,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ). ໃນກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ແລະ ທ່ານ ກ ຜູ້ເປັນພໍ່ ໄດ້ເສຍຊີວິດ ຫຼັງວັນສຸດທ້າຍຂອງການດໍາເນີນທຸລະກິດຂອງທະນາຄານ A ແລະ ພາກສ່ວນກ່ຽວຂ້ອງໄດ້ຢັ້ງຢືນໃຫ້ ທ່ານ ຂ ເປັນຜູ້ສືບທອດມູນມໍລະດົກ, ທ່ານ ຂ ຈະໄດ້ຮັບເງິນປົກປ້ອງທີ່ເປັນສ່ວນຂອງຕົນເອງ 100,000,000 ກີບ ແລະ ເງິນປົກປ້ອງຂອງພໍ່ ຈໍານວນ 100,000,000 ກີບ ລວມເງິນປົກປ້ອງທັງໝົດຈໍານວນ 200,000,000 ກີບ.

**ຕົວຢ່າງ 02:** ທ່ານ ກ ເປັນພໍ່ຂອງ ທ່ານ ຂ ແລະ ທ່ານ ຄ, ທັງສາມຄົນ ມີບັນຊີເງິນຝາກ ຢູ່ທະນາຄານ A ຜູ້ລະ 01 ບັນຊີ, ບັນຊີເງິນຝາກຂອງພໍ່ມີຍອດເຫຼືອເງິນຝາກ ຈໍານວນ 300,000,000 ກີບ ແລະ ບັນຊີເງິນ

ຝາກຂອງລູກທັງສອງຄົນມີຍອດເຫຼືອເງິນຝາກ ບັນຊີລະ 50,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ). ໃນກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ແລະ ທ່ານ ກ ຜູ້ເປັນພໍ່ ໄດ້ເສຍຊີວິດ ຫຼັງວັນສຸດທ້າຍຂອງການດໍາເນີນທຸລະກິດຂອງ ທະນາຄານ A ແລະ ພາກສ່ວນກ່ຽວຂ້ອງໄດ້ຢັ້ງຢືນໃຫ້ ທ່ານ ຂ ແລະ ທ່ານ ຄ ເປັນຜູ້ສືບທອດມູນມໍລະດົກ ທັງສອງຄົນ ຈະໄດ້ຮັບເງິນປົກປ້ອງຈາກ ສປງ ດັ່ງນີ້: ໄດ້ຮັບເງິນປົກປ້ອງທີ່ເປັນສ່ວນຂອງຕົນເອງ ຜູ້ລະ 50,000,000 ກີບ ແລະ ເງິນປົກປ້ອງຂອງພໍ່ ຈໍານວນ 100,000,000 ກີບ ແບ່ງປັນໃຫ້ລູກທັງສອງຄົນ ຜູ້ລະ 50,000,000 ກີບ, ທັງສອງຄົນ ຈະໄດ້ຮັບເງິນປົກປ້ອງ ທັງໝົດ ຜູ້ລະ 100,000,000 ກີບ.

**6.** ຜູ້ຝາກເງິນທີ່ຝາກເງິນໄວ້ນໍາສະມາຊິກທີ່ມີການຄວບກິດຈະການເຂົ້າກັນ ຈະໄດ້ຮັບເງິນປົກປ້ອງແຕ່ລະກໍລະນີດັ່ງນີ້:

❖ ໃນກໍລະນີ ສະມາຊິກໄດ້ຄວບກິດຈະການເຂົ້າກັນໜຶ່ງປີລົງມາ ຢູ່ໃນສະພາວະລົ້ມລະລາຍ, ສໍານັກງານປົກປ້ອງເງິນຝາກ ຈະຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນໜຶ່ງລາຍ ຕໍ່ສະມາຊິກແຕ່ລະແຫ່ງ ກ່ອນການຄວບກິດຈະການ ໃນວົງເງິນປົກປ້ອງສູງສຸດ ທີ່ໄດ້ກໍານົດໄວ້ໃນລະບຽບການ

**ຕົວຢ່າງ 01:** ທ່ານ ກ ມີບັນຊີເງິນຝາກ ຢູ່ທະນາຄານ A ຈໍານວນ 1 ບັນຊີ ມີຍອດເຫຼືອເງິນຝາກ 100,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແລະ ຢູ່ທະນາຄານ B ຈໍານວນ 1 ບັນຊີ ມີຍອດເຫຼືອເງິນຝາກ 100,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ). ທະນາຄານ A ແລະ ທະນາຄານ B ໄດ້ຄວບກິດຈະການເຂົ້າກັນ ແລະ ທະນາຄານທີ່ຄວບກິດຈະການດັ່ງກ່າວ ຕົກຢູ່ໃນສະພາວະລົ້ມລະລາຍ ໃນເດືອນທີ 11 ນັບແຕ່ວັນທີ່ມີການຄວບກິດຈະການ. ກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ທ່ານ ກ ຈະໄດ້ຮັບເງິນປົກປ້ອງ 200,000,000 ກີບ.

❖ ໃນກໍລະນີ ສະມາຊິກໄດ້ຄວບກິດຈະການເຂົ້າກັນໜຶ່ງປີຂຶ້ນໄປ ຢູ່ໃນສະພາວະລົ້ມລະລາຍ, ບັນຊີທັງໝົດຂອງຜູ້ຝາກເງິນທີ່ມີບັນຊີເງິນຝາກຢູ່ນໍາສະມາຊິກແຕ່ລະແຫ່ງ ກ່ອນການຄວບກິດຈະການ ຈະຖືກລວມເຂົ້າກັນເປັນບັນຊີດຽວ ແລະ ສໍານັກງານປົກປ້ອງເງິນຝາກ ຈະຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນໜຶ່ງລາຍຕໍ່ສະມາຊິກດັ່ງກ່າວ ໃນວົງເງິນປົກປ້ອງສູງສຸດ ທີ່ໄດ້ກໍານົດໄວ້ໃນລະບຽບການ.

**ຕົວຢ່າງ 02:** ທ່ານ ກ ມີບັນຊີເງິນຝາກ ຢູ່ທະນາຄານ A ຈໍານວນ 1 ບັນຊີ ມີຍອດເຫຼືອເງິນຝາກ 100,00,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແລະ ຢູ່ທະນາຄານ B ຈໍານວນ 1 ບັນຊີ ມີຍອດເຫຼືອເງິນຝາກ 100,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແຕ່ທະນາຄານ A ແລະ ທະນາຄານ B ໄດ້ຄວບກິດຈະການເຂົ້າກັນ ເປັນເວລາເກີນ 1 ປີ. ຈາກນັ້ນ, ທະນາຄານດັ່ງກ່າວ ຕົກຢູ່ໃນສະພາວະລົ້ມລະລາຍ. ກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ທ່ານ ກ ຈະໄດ້ຮັບເງິນປົກປ້ອງ 100,000,000 ກີບ. ສໍາລັບຈໍານວນເງິນທີ່ຍັງເຫຼືອ 100,000,000 ກີບ ທ່ານ ກ ຈະໄດ້ຮັບໃນຂະບວນການຊໍາລະສະສາງ.

**7.** ການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ ຕ້ອງມີການຫັກລົບໜີ້ສິນ ໂດຍຖືເອົາຂໍ້ມູນໜີ້ຫຼ້າສຸດ ທີ່ຄະນະຄວບຄຸມສະໜອງໃຫ້ ສປງ. ພາຍຫຼັງສໍາເລັດການຫັກລົບໜີ້ສິນ ຜູ້ຮ້ອງຂໍຈິ່ງສາມາດຮັບເງິນປົກປ້ອງຕາມຈໍານວນເງິນຝາກທີ່ຍັງເຫຼືອໃນວົງເງິນປົກປ້ອງສູງສຸດທີ່ກໍານົດໄວ້. ກໍລະນີ ໜີ້ສິນ ຂອງຜູ້ຝາກເງິນ ມີຈໍານວນເທົ່າກັບ ຫຼື ສູງກວ່າ ເງິນຝາກທີ່ໄດ້ຮັບການປົກປ້ອງ, ຜູ້ຝາກເງິນດັ່ງກ່າວ ຈະບໍ່ໄດ້ຮັບເງິນປົກປ້ອງຈາກສໍານັກງານປົກປ້ອງເງິນຝາກ

**ຕົວຢ່າງ 01:** ທ່ານ ກ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງ ຢູ່ທະນາຄານ A ຈໍານວນ 03 ບັນຊີ ລວມເປັນເງິນ ທັງໝົດ ຈໍານວນ 100,000,000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ). ພ້ອມດຽວກັນນັ້ນ, ທ່ານ ກ ມີໜີ້ສິນທີ່ບໍ່ເກີນກໍານົດຊໍາລະຢູ່ທະນາຄານ A ຈໍານວນ 50,000,000 ກີບ ແລະ ມີໜີ້ສິນທີ່ເກີນກໍານົດຊໍາລະ ຈໍານວນ 10,000,000 ກີບ . ກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ, ທ່ານ ກ ຈະໄດ້ຮັບເງິນ

ປົກປ້ອງ ຈຳນວນ 90,000,000 ກີບ ຈາກ ສປງ ພາຍຫຼັງຫັກລົບໜີ້ສິນທີ່ເກີນກຳນົດຊຳລະ ຈຳນວນ 10,000,000 ກີບ.

**ຕົວຢ່າງ 02:** ທ່ານ ກ ມີບັນຊີເງິນຝາກທີ່ໄດ້ຮັບການປົກປ້ອງ ຢູ່ທະນາຄານ A ຈຳນວນ 03 ບັນຊີ ລວມເປັນເງິນ ທັງໝົດ ຈຳນວນ 100,000,000 ກີບ (ລວມທັງ ຕົ້ນທຶນ ແລະ ດອກເບ້ຍ). ພ້ອມດຽວກັນນັ້ນ, ທ່ານ ກ ມີໜີ້ສິນເກີນກຳນົດຊຳລະຢູ່ທະນາຄານ A ຈຳນວນ 110,000,000 ກີບ. ກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ, ທ່ານ ກ ຈະບໍ່ໄດ້ຮັບເງິນປົກປ້ອງ ຈາກ ສປງ.

**ຂ. ບູລິມະສິດໃນການຈ່າຍເງິນປົກປ້ອງ**

ສຳນັກງານປົກປ້ອງເງິນຝາກ ຈະຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນທີ່ບໍ່ຕິດພັນກັບເງື່ອນໄຂຫຍຸ້ງຍາກ ຊຶ່ງຕ້ອງໄດ້ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນກ່ອນ ເປັນຕົ້ນແມ່ນ: ເຈົ້າຂອງບັນຊີເງິນຝາກເສຍຊີວິດ, ຜູ້ຝາກເງິນທີ່ມີພັນທະໜີ້ສິນ ແລະ ບັນຫາອື່ນທີ່ສົ່ງຜົນເຮັດໃຫ້ການຈ່າຍເງິນປົກປ້ອງມີຄວາມຫຼ້າຊ້າ.

## VII. ການຄິດໄລ່ເງິນປົກປ້ອງ

**1.** ຜູ້ຝາກເງິນທີ່ມີຫຼາຍບັນຊີ ແລະ ຫຼາຍສະກຸນເງິນ ຕ້ອງນຳເອົາບັນຊີເງິນຝາກທີ່ເປັນສະກຸນເງິນກີບມາຄິດໄລ່ເງິນປົກປ້ອງກ່ອນ ຫາກບໍ່ເກີນວົງເງິນປົກປ້ອງຈຶ່ງນຳບັນຊີເງິນຝາກທີ່ເປັນສະກຸນເງິນຕາຕ່າງປະເທດມາຄິດໄລ່ ໂດຍຈັດລຽງຕາມລະຫັດສະກຸນເງິນທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ເຊັ່ນ: 01 ເງິນໂດລາສະຫະລັດ, 02 ເງິນບາດ ແລະ ສະກຸນອື່ນຕາມລຳດັບ. ກໍລະນີ ໃນແຕ່ລະສະກຸນມີຫຼາຍບັນຊີ ໃຫ້ນຳເອົາບັນຊີທີ່ມີຍອດເຫຼືອເງິນຝາກໜ້ອຍທີ່ສຸດມາຄິດໄລ່ກ່ອນ ຫາກບໍ່ເກີນວົງເງິນປົກປ້ອງສູງສຸດ ຈຶ່ງນຳເອົາບັນຊີອື່ນມາຄິດໄລ່ຕາມລຳດັບ ແຕ່ໜ້ອຍຫາຫຼາຍ.

**ຕົວຢ່າງ:** ທ່ານ ກ ມີບັນຊີເງິນຝາກ ຢູ່ທະນາຄານ A ຈຳນວນ 6 ບັນຊີ ຄື:

– ບັນຊີເງິນຝາກສະກຸນເງິນກີບ 2 ບັນຊີ ບັນຊີທີໜຶ່ງ ມີຍອດເຫຼືອເງິນຝາກ ຈຳນວນ 10,000,000 ກີບ ແລະ ບັນຊີທີສອງ ມີຍອດເຫຼືອເງິນຝາກ ຈຳນວນ 15,000,000 ກີບ;

– ສະກຸນເງິນໂດລາ 2 ບັນຊີ ບັນຊີທີໜຶ່ງ ມີຍອດເຫຼືອເງິນຝາກ ຈຳນວນ 1,000 ໂດລາ ແລະ ບັນຊີທີສອງ ມີຍອດເຫຼືອເງິນ ຈຳນວນ 1,500 ໂດລາ (ອັດຕາແລກປ່ຽນ 1 ໂດລາ= 20,000 ກີບ);

– ສະກຸນເງິນບາດ 2 ບັນຊີ ບັນຊີທີໜຶ່ງ ຈຳນວນ 10,000 ບາດ ແລະ ບັນຊີທີສອງ ຈຳນວນ 100,000 ບາດ (ອັດຕາແລກປ່ຽນ 1 ບາດ=600 ກີບ). ຫາກທະນາຄານ A ຕົກຢູ່ໃນສະພາວະລົ້ມລະລາຍ ແລະ ວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ສປງ ຕ້ອງຄິດໄລ່ເງິນປົກປ້ອງໃຫ້ທ່ານ ກ ດັ່ງນີ້:

ນຳເອົາບັນຊີເງິນຝາກທີ່ເປັນສະກຸນເງິນກີບມາຄິດໄລ່ກ່ອນ ໂດຍລຽງຕາມລຳດັບແຕ່ໜ້ອຍຫາຫຼາຍ ຄື:

- ບັນຊີເງິນກີບ ບັນຊີທີໜຶ່ງ ຈຳນວນ 10,000,000 ກີບ;
- ບັນຊີເງິນກີບ ບັນຊີທີສອງ ຈຳນວນ 15,000,000 ກີບ

ລວມເງິນຝາກທີ່ເປັນບັນຊີເງິນກີບ ທັງໝົດ 25,000,000 ກີບ ເຫັນວ່າ ຍັງບໍ່ເກີນວົງເງິນປົກປ້ອງສູງສຸດ, ໃຫ້ນຳເອົາບັນຊີເງິນຝາກທີ່ເປັນສະກຸນເງິນໂດລາມາຄິດໄລ່ເພີ່ມ ໂດຍລຽງຕາມລຳດັບແຕ່ໜ້ອຍຫາຫຼາຍ ຄື:

- ບັນຊີເງິນໂດລາ ບັນຊີທີໜຶ່ງ ຈຳນວນ 1,000 ໂດລາ ຫຼື 20,000,000 ກີບ;
- ບັນຊີເງິນໂດລາ ບັນຊີທີສອງ ຈຳນວນ 1,500 ໂດລາ ຫຼື 30,000,000 ກີບ.

ລວມເງິນຝາກທີ່ເປັນບັນຊີເງິນກີບ ແລະ ບັນຊີເງິນໂດລາທຽບເທົ່າກີບ ຈຳນວນ 75,000,000 ກີບ ເຫັນວ່າ ຍັງບໍ່ເກີນວົງເງິນປົກປ້ອງສູງສຸດ, ໃຫ້ນຳເອົາບັນຊີເງິນຝາກທີ່ເປັນສະກຸນເງິນບາດມາຄິດໄລ່ເພີ່ມ ໂດຍລຽງຕາມລຳດັບແຕ່ໜ້ອຍຫາຫຼາຍ ຄື:

ບັນຊີເງິນບາດ ບັນຊີທີໜຶ່ງ ຈຳນວນ 10,000 ບາດ ຫຼື 6,000,000 ກີບ ເມື່ອລວມກັບເງິນຝາກທີ່ເປັນສະກຸນເງິນກີບ ແລະ ໂດລາສະຫະລັດ ຈຳນວນ 75,000,000 ກີບ ຈະເປັນເງິນທັງໝົດ 81,000,000 ກີບ ເຫັນ

ວ່າຍັງບໍ່ເຕັມວົງເງິນປົກປ້ອງສູງສຸດ. ສະນັ້ນ, ຈຶ່ງນຳເອົາສ່ວນໜຶ່ງຂອງບັນຊີເງິນບາດ ບັນຊີທີສອງ ຈຳນວນ 31,666.67 ບາດ ຫຼື 19,000,000 ກີບ ມາຄິດໄລ່ເພີ່ມໃຫ້ເຕັມຈຳນວນວົງເງິນປົກປ້ອງສູງຄື 100,000,000 ກີບ ຊຶ່ງບັນຊີດັ່ງກ່າວ ຈະມີຍອດເຫຼືອເງິນຝາກ ຈຳນວນ 68,333.33 ບາດ. ສຳລັບ ເງິນທີ່ເກີນວົງເງິນປົກປ້ອງສູງສຸດ ສປງ ຈະສັງລວມຂໍ້ມູນດັ່ງກ່າວ ໂດຍຮັກສາຂໍ້ມູນສະກຸນເງິນເດີມໄວ້ ເພື່ອສະໜອງໃຫ້ຄະນະຊຳລະສະສາງ ເພື່ອເປັນຂໍ້ມູນໃນການປະຕິບັດວຽກງານຕາມກົດໝາຍ ແລະ ລະບຽບການ.

**2.** ຜູ້ຝາກເງິນທີ່ມີໜີ້ສິນ ຫຼື ຄ່າໃຊ້ຈ່າຍທີ່ຕິດພັນກັບໜີ້ສິນ ຕ້ອງໄດ້ມີການຫັກລົບກ່ອນການຈ່າຍເງິນປົກປ້ອງ ໃນແຕ່ລະກໍລະນີດັ່ງນີ້:

– ກໍລະນີຜູ້ຝາກເງິນມີບັນຊີເງິນຝາກ 1 ບັນຊີ ແລະ ບັນຊີເງິນກູ້ທີ່ເກີນກຳນົດຊຳລະ 1 ບັນຊີ ທີ່ເປັນສະກຸນເງິນດຽວກັນ ໃຫ້ນຳເງິນຝາກ ແລະ ໜີ້ສິນຕ່າງໆ ມາຫັກລົບກັນທັນທີ, ຫາກເງິນຝາກສູງເກີນໜີ້ສິນຜູ້ຝາກເງິນຈຶ່ງໄດ້ຮັບເງິນປົກປ້ອງ ຈາກ ສປງ ຕາມວົງເງິນປົກປ້ອງສູງສຸດ, ກໍລະນີໜີ້ສິນສູງກວ່າເງິນຝາກຜູ້ຝາກເງິນຈະບໍ່ໄດ້ຮັບເງິນປົກປ້ອງຈາກ ສປງ.

**ຕົວຢ່າງ 01:** ທ່ານ ກ ເປັນລູກຄ້າຂອງທະນາຄານ A ມີບັນຊີເງິນຝາກທີ່ເປັນສະກຸນເງິນກີບ 1 ບັນຊີ, ມີຍອດເຫຼືອເງິນຝາກ ຈຳນວນ 102,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແລະ ມີເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນກີບ 1 ບັນຊີ, ມີຍອດເຫຼືອເງິນກູ້ ຈຳນວນ 50,000,000 ກີບ, ມີຄ່າປັບໃໝ 1,000,000 ກີບ. ໃນກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ແລະ ທະນາຄານ A ຕົກຢູ່ໃນສະພາວະລົ້ມລະລາຍ ສປງ ຈະຄິດໄລ່ເງິນປົກປ້ອງໃຫ້ຜູ້ຝາກເງິນດັ່ງນີ້:

| ຍອດເຫຼືອເງິນຝາກ | ຍອດເຫຼືອເງິນກູ້ທີ່ເກີນກຳນົດຊຳລະ | ເງິນຝາກຫັກລົບເງິນກູ້ | ເງິນປົກປ້ອງ |
|---|---|---|---|
| 102,000,000 | 51,000,000 | 51,000,000 | 51,000,000 |
| 102,000,000 | 51,000,000 | 51,000,000 | 51,000,000 |

ທ່ານ ກ ຈະໄດ້ຮັບເງິນປົກປ້ອງ ຈາກ ສປງ ຈຳນວນ 51,000,000 ກີບ (ເງິນຝາກ 102,000,000 ກີບ ລົບ ເງິນກູ້ທີ່ເກີນກຳນົດຊຳລະ+ຄ່າປັບໃໝ 51,000,000 ກີບ).

**ຕົວຢ່າງ 02:** ທ່ານ ກ ເປັນລູກຄ້າຂອງທະນາຄານ A ມີບັນຊີເງິນຝາກທີ່ເປັນສະກຸນເງິນໂດລາ 1 ບັນຊີ, ມີຍອດເຫຼືອເງິນຝາກ ຈຳນວນ 5,100 ໂດລາ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) (ອັດຕາແລກປ່ຽນທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນວັນສຸດທ້າຍຂອງການດຳເນີນທຸລະກິດ 1 ໂດລາ ເທົ່າກັບ 20,000 ກີບ) ແລະ ມີເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນໂດລາ 1 ບັນຊີ, ມີຍອດເຫຼືອເງິນກູ້ ຈຳນວນ 4,100 ໂດລາ (ລວມທັງຕົ້ນທຶນ ແລະ ດອກເບ້ຍ). ໃນກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ແລະ ທະນາຄານ A ຕົກຢູ່ໃນສະພາວະລົ້ມລະລາຍ ສປງ ຈະຄິດໄລ່ເງິນປົກປ້ອງໃຫ້ຜູ້ຝາກເງິນດັ່ງນີ້:

| ຍອດເຫຼືອເງິນຝາກ | ຍອດເຫຼືອເງິນກູ້ທີ່ເກີນກຳນົດຊຳລະ | ເງິນຝາກຫັກລົບເງິນກູ້ | | ເງິນປົກປ້ອງ |
|---|---|---|---|---|
| | | ສະກຸນໂດລາ | ທຽບເທົ່າກີບ | |
| 5,100 | 4,100 | 1,000 | 20,000,000 | 20,000,000 |
| 5,100 | 4,100 | 1,000 | 20,000,000 | 20,000,000 |

ທ່ານ ກ ຈະໄດ້ຮັບເງິນປົກປ້ອງ ຈາກ ສປງ ຈຳນວນ 20,000,000 ກີບ (ເງິນຝາກ 5,100 ໂດລາ ລົບ ເງິນກູ້ 4,100 ໂດລາ ເທົ່າກັບ 1,000 ໂດລາ ຄູນ 20,000 ກີບ).

**ຕົວຢ່າງ 03:** ທ່ານ ກ ເປັນລູກຄ້າຂອງທະນາຄານ A ມີບັນຊີເງິນຝາກທີ່ເປັນສະກຸນເງິນກີບ 1 ບັນຊີ, ມີຍອດເຫຼືອເງິນຝາກ ຈຳນວນ 51,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແລະ ມີເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນກີບ 1 ບັນຊີ, ມີຍອດເຫຼືອເງິນກູ້ ຈຳນວນ 105,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ). ໃນກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ແລະ ທະນາຄານ A ຕົກຢູ່ໃນສະພາວະລົ້ມລະລາຍ ສປງ ຈະຄິດໄລ່ເງິນປົກປ້ອງໃຫ້ຜູ້ຝາກເງິນດັ່ງນີ້:

| **ຍອດເຫຼືອເງິນຝາກ** | **ຍອດເຫຼືອເງິນກູ້** | **ເງິນຝາກຫັກລົບເງິນກູ້** |
|---|---|---|
| 51,000,000 | 105,000,000 | (54,000,000) |
| 51,000,000 | 105,000,000 | (54,000,000) |

ຜ່ານການຄິດໄລ່ ແລະ ຫັກລົບ ເຫັນວ່າ ທ່ານ ກ ຍັງມີໜີ້ສິນ ຈຳນວນ 54,000,000 ກີບ. ສະນັ້ນ, ຈຶ່ງບໍ່ໄດ້ຮັບເງິນປົກປ້ອງ ຈາກ ສປງ.

**3.** ກໍລະນີຜູ້ຝາກເງິນມີຫຼາຍບັນຊີເງິນຝາກ, ຫຼາຍບັນຊີເງິນກູ້ທີ່ເກີນກຳນົດຊຳລະ ແລະ ມີຫຼາຍສະກຸນເງິນ ຕ້ອງນຳເອົາບັນຊີເງິນຝາກ ແລະ ເງິນກູ້ທີ່ເປັນສະກຸນເງິນດຽວກັນມາຫັກລົບກ່ອນ. ຈາກນັ້ນ, ຈຶ່ງນຳສ່ວນຕ່າງມາຄິດໄລ່ລວມກັນ,

**ຕົວຢ່າງ 01:** ທ່ານ ກ ເປັນລູກຄ້າຂອງທະນາຄານ A ມີເງິນຝາກ 4 ບັນຊີ ໃນນີ້, ເປັນສະກຸນເງິນກີບ 2 ບັນຊີ ຄື ບັນຊີທີໜຶ່ງ ມີຍອດເຫຼືອເງິນຝາກ ຈຳນວນ 51,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ), ບັນຊີທີສອງ ມີຍອດເຫຼືອເງິນຝາກ ຈຳນວນ 81,500,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແລະ ເປັນສະກຸນເງິນໂດລາ 2 ບັນຊີ ຄື ບັນຊີທີໜຶ່ງ ມີຍອດເຫຼືອເງິນຝາກ ຈຳນວນ 3,000 ໂດລາ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແລະ ບັນຊີທີສອງ ມີຍອດເຫຼືອເງິນຝາກ ຈຳນວນ 5,000 ໂດລາ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) (ອັດຕາແລກປ່ຽນທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນວັນສຸດທ້າຍຂອງການດຳເນີນທຸລະກິດ 1 ໂດລາ ເທົ່າກັບ 20,000 ກີບ), ພ້ອມດຽວກັນນີ້ ທ່ານ ກ ຍັງມີເງິນກູ້ຢືມຈາກທະນາຄານ A ຊຶ່ງມີເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນກີບ 2 ບັນຊີ, ບັນຊີທີໜຶ່ງ ມີຍອດເຫຼືອເງິນກູ້ 50,000,000 ກີບ, ບັນຊີທີສອງ ມີຍອດເຫຼືອເງິນກູ້ 55,000,000 ກີບ ແລະ ເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນໂດລາ 2 ບັນຊີ, ບັນຊີທີໜຶ່ງ ມີຍອດເຫຼືອເງິນກູ້ 2,000 ໂດລາ, ບັນຊີທີສອງ ມີຍອດເຫຼືອເງິນກູ້ 2,500 ໂດລາ. ໃນກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ແລະ ທະນາຄານ A ຕົກຢູ່ໃນສະພາວະລົ້ມລະລາຍ ສປງ ຈະຄິດໄລ່ເງິນປົກປ້ອງໃຫ້ ທ່ານ ກ ດັ່ງນີ້:

❖ **ສະກຸນເງິນກີບ**

| **ລາຍການບັນຊີ** | **ຍອດເຫຼືອ ເງິນຝາກ** | **ຍອດເຫຼືອເງິນກູ້ ທີ່ເກີນກຳນົດຊຳລະ** | **ເງິນຝາກຫັກລົບເງິນກູ້** | **ເງິນປົກປ້ອງ** |
|---|---|---|---|---|
| ບັນຊີທີໜຶ່ງ | 51,000,000 | 50,000,000 | 1,000,000 | 1,000,000 |
| ບັນຊີທີສອງ | 81,500,000 | 55,000,000 | 26,500,000 | 26,500,000 |
| ລວມ | 132,500,000 | 105,000,000 | 27,500,000 | 27,500,000 |

❖ ສະກຸນເງິນໂດລາ

| ລາຍການບັນຊີເງິນຝາກ | ຍອດເຫຼືອເງິນຝາກ | ຍອດເຫຼືອເງິນກູ້ທີ່ເກີນກຳນົດຊຳລະ | | ເງິນຝາກຫັກລົບເງິນກູ້ | ເງິນປົກປ້ອງ | |
|---|---|---|---|---|---|---|
| | | ສະກຸນໂດລາ |ທຽບເທົ່າກີບ | | ສະກຸນໂດລາ | ທຽບເທົ່າກີບ |
| ບັນຊີທີໜຶ່ງ | 3,000 | 2,000 | 40,000,000 | 1,000 | 1,000 | 20,000,000 |
| ບັນຊີທີສອງ | 5,000 | 2,500 | 50,000,000 | 2,500 | 2,500 | 50,000,000 |
| ລວມ | 8,000 | 4,500 | 90,000,000 | 3,500 | 3,500 | 70,000,000 |

ຜ່ານການຄິດໄລ່ ເຫັນວ່າ ທ່ານ ກ ມີສ່ວນຕ່າງເງິນຝາກຫັກລົບເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນກີບ ຈຳນວນ 27,500,000 ກີບ ແລະ ສ່ວນຕ່າງເງິນຝາກຫັກລົບເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນໂດລາ ຈຳນວນ 3,500 ໂດລາ ຄູນໃຫ້ອັດຕາແລກປ່ຽນ 20,000 ກີບ ເທົ່າກັບ 70,000,000 ກີບ. ສະນັ້ນ, ທ່ານ ກ ຈະໄດ້ຮັບເງິນປົກປ້ອງຈາກ ສປງ ຈຳນວນ 97,500,000 ກີບ.

**ຕົວຢ່າງ 02:** ທ່ານ ກ ເປັນລູກຄ້າຂອງທະນາຄານ A ມີເງິນຝາກ 4 ບັນຊີ. ໃນນີ້, ເປັນສະກຸນເງິນກີບ 2 ບັນຊີ ຄື ບັນຊີທີໜຶ່ງ ມີຍອດເຫຼືອເງິນຝາກ ຈຳນວນ 51,000,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ), ບັນຊີທີສອງ ມີຍອດເຫຼືອເງິນຝາກ ຈຳນວນ 81,500,000 ກີບ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແລະ ເປັນສະກຸນເງິນໂດລາ 2 ບັນຊີ ຄື ບັນຊີທີໜຶ່ງ ມີຍອດເຫຼືອເງິນຝາກ ຈຳນວນ 3,000 ໂດລາ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) ແລະ ບັນຊີທີສອງ ມີຍອດເຫຼືອເງິນຝາກ ຈຳນວນ 5,000 ໂດລາ (ລວມທັງຕົ້ນທຶນ ແລະ ດອກເບ້ຍ) (ອັດຕາແລກປ່ຽນທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນວັນສຸດທ້າຍຂອງການດຳເນີນທຸລະກິດ 1 ໂດລາ ເທົ່າກັບ 20,000 ກີບ), ພ້ອມດຽວກັນນີ້ ທ່ານ ກ ຍັງມີບັນຊີເງິນກູ້ຢືມຈາກທະນາຄານ A ຊຶ່ງມີເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນກີບ 2 ບັນຊີ, ບັນຊີທີໜຶ່ງ ມີຍອດເຫຼືອເງິນກູ້ 50,000,000 ກີບ, ບັນຊີທີສອງ ມີຍອດເຫຼືອເງິນກູ້ 55,000,000 ກີບ ແລະ ເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນໂດລາ 2 ບັນຊີ, ບັນຊີທີໜຶ່ງ ມີຍອດເຫຼືອເງິນກູ້ 4,000 ໂດລາ, ບັນຊີທີສອງ ມີຍອດເຫຼືອເງິນກູ້ 5,000 ໂດລາ. ໃນກໍລະນີວົງເງິນປົກປ້ອງສູງສຸດເທົ່າກັບ 100,000,000 ກີບ ແລະ ທະນາຄານ A ຕົກຢູ່ໃນສະພາວະລົ້ມລະລາຍ ສປງ ຈະຄິດໄລ່ເງິນປົກປ້ອງໃຫ້ທ່ານ ກ ກໍດັ່ງນີ້:

❖ ສະກຸນເງິນກີບ

| ລາຍການບັນຊີ | ຍອດເຫຼືອເງິນຝາກ | ຍອດເຫຼືອເງິນກູ້ | ເງິນຝາກຫັກລົບເງິນກູ້ | ເງິນປົກປ້ອງ |
|---|---|---|---|---|
| ບັນຊີທີໜຶ່ງ | 51,000,000 | 50,000,000 | 1,000,000 | 1,000,000 |
| ບັນຊີທີສອງ | 81,500,000 | 55,000,000 | 26,500,000 | 26,500,000 |
| ລວມ | 132,500,000 | 105,000,000 | 27,500,000 | 27,500,000 |

❖ ສະກຸນເງິນໂດລາ

| ລາຍການບັນຊີເງິນຝາກ | ຍອດເຫຼືອເງິນຝາກ | ຍອດເຫຼືອເງິນກູ້ | ເງິນຝາກຫັກລົບເງິນກູ້ | ເງິນປົກປ້ອງ | |
|---|---|---|---|---|---|
| | | | | ສະກຸນໂດລາ | ທຽບເທົ່າກີບ |
| ບັນຊີທີໜຶ່ງ | 3,000 | 4,000 | (1,000) | (1,000) | (20,000,000) |
| ບັນຊີທີສອງ | 5,000 | 5,000 | 0 | 0 | 0 |
| ລວມ | 8,000 | 10,000 | (1,000) | (1,000) | (20,000,000) |

ຜ່ານການຄິດໄລ່ ເຫັນວ່າ ທ່ານ ກ ມີສ່ວນຕ່າງເງິນຝາກຫັກລົບເງິນກູ້ທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນກີບ ຈຳນວນ 27,500,000 ກີບ ແລະ ສ່ວນຕ່າງໜີ້ສິນຫັກລົບເງິນຝາກທີ່ເປັນສະກຸນເງິນໂດລາ ຈຳນວນ 1,000 ໂດລາ ຄູນໃຫ້ອັດຕາແລກປ່ຽນ 20,000 ກີບ ເທົ່າກັບ 20,000,000 ກີບ. ຈາກນັ້ນ, ໃຫ້ນຳເອົາສ່ວນຕ່າງ

ເງິນຝາກທີ່ເປັນສະກຸນເງິນກີບ ຈຳນວນ 27,500,000 ກີບ ຫັກລົບກັບ ສ່ວນຕ່າງໜີ້ສິນທີ່ເກີນກຳນົດຊຳລະທີ່ເປັນສະກຸນເງິນໂດລາ ຈຳນວນ 1,000 ໂດລາ ຫຼື 20,000,000 ກີບ. ສະນັ້ນ, ທ່ານ ກ ຈະໄດ້ຮັບເງິນປົກປ້ອງຈາກ ສປງ ຈຳນວນ 7,500,000 ກີບ.

## VIII. ການຈັດຕັ້ງປະຕິບັດ

ສຳນັກງານປົກປ້ອງເງິນຝາກ, ສະມາຊິກ, ຜູ້ຝາກເງິນ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

ສຳນັກງານປົກປ້ອງເງິນຝາກ ຕ້ອງສ້າງຄູ່ມືການຈ່າຍເງິນປົກປ້ອງ ເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີຄວາມລະອຽດ ແລະ ຊັດເຈນ.

## IX. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄຳແນະນຳກ່ຽວກັບການຈ່າຍເງິນປົກປ້ອງ ສະບັບເລກທີ 02/ສພບ.ສປງ, ລົງວັນທີ 29 ເມສາ 2022.

**ປະທານສະພາບໍລິຫານ**

ສັນແກ້ວ ຫຼ້າມະນີເວົາ